ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----000-----

ພັກປະຊາຊົນປະຕິວັດລາວ

ຄະນະຈັດຕັ້ງສູນກາງພັກ ເລກທີ291/ຄຈສພ

ນະຄອນຫຼວງວຽງຈັນ, ວັນທີ 26/04/2018

# ຄໍາແນະນໍາ
# ກ່ຽວກັບການຈັດຕັ້ງປະຕິບັດ
# ຄໍາສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການ ເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ

ເຖິງ: ຄະນະພັກກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ

- ອີງຕາມຄໍາສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສເຂັ້ມແຂງ, ໜັກແໜ້ນ.
- ອີງຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 07/ກມສພ, ລົງວັນທີ 30/08/2012, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຈັດຕັ້ງສູນກາງພັກ.

ຄະນະຈັດຕັ້ງສູນກາງພັກ ອອກຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດ ດັ່ງນີ້:

## I. ຈຸດປະສົງລະດັບຄາດໝາຍ

- ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຄໍາສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບໃນທົ່ວພັກ.
- ເຮັດໃຫ້ໜ່ວຍພັກຮູ້ສ້າງແຜນການ, ຮູ້ນໍາພາຈັດຕັ້ງປະຕິບັດແຜນການ, ຮູ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການ, ຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ.

## II. ວິທີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ

### ກ. ການສ້າງແຜນການ

- ກ່ອນຈະສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໜ່ວຍພັກຕ້ອງໄດ້ສະຫຼຸບສະພາບການເຄື່ອນໄຫວຊີ້ນຳ-ນຳພາລວມຂອງໜ່ວຍພັກ ໂດຍສັງເຂບທັງດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ໃນໄລຍະຜ່ານມາ ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃຫ້ແກ່ການວາງແຜນການຄາດໝາຍສູ້ຊົນຂອງໜ່ວຍພັກ.

- ທຸກໜ່ວຍພັກຕ້ອງໄດ້ສ້າງແຜນການສູ້ຊົນ ໂດຍອີງໃສ່ສະພາວະຄວາມເປັນຈິງຂອງໜ່ວຍພັກຕົນ, ອີງໃສ່ເນື້ອໃນທີ່ກຳນົດໄວ້ໃນຄຳສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ແຜນພັດທະນາເສດຖະກິດ-ສັງຄົມປະຈຳປີຂອງລັດ.

- ພາຍຫຼັງໜ່ວຍພັກໄດ້ຮັບຮອງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນແລ້ວ ຈຶ່ງນຳເອົາແຜນການດັ່ງກ່າວໄປເຜີຍແຜ່ໃຫ້ອົງການປົກຄອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທີ່ຢູ່ໃນຂອບເຂດການນຳພາຂອງໜ່ວຍພັກ ເພື່ອສ້າງຄວາມເປັນເອກະພາບໃນລະດັບສູງ; ຫຼັງຈາກນັ້ນ ຈຶ່ງລາຍງານຄະນະພັກຂັ້ນເທິງກຸ້ມຕົນຮັບຊາບ ເພື່ອຕິດຕາມ.

### ຂ. ການຈັດຕັ້ງປະຕິບັດແຜນການ

ການຈັດຕັ້ງປະຕິບັດແຜນການຂອງໜ່ວຍພັກກຳນົດ 1 ປີ ຕາມແຜນພັດທະນາເສດຖະກິດ-ສັງຄົມປະຈຳປີຂອງລັດ, ໜ່ວຍພັກຕ້ອງເປັນເຈົ້າການຫັນເອົາແຜນການດັ່ງກ່າວ ສ້າງເປັນແຜນການເດືອນຂອງໜ່ວຍພັກ ພ້ອມທັງມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ຄະນະໜ່ວຍພັກ ແລະ ສະມາຊິກພັກພາຍໃນໜ່ວຍພັກຢ່າງລະອຽດ ເພື່ອນຳພາຈັດຕັ້ງປະຕິບັດ, ໃຫ້ເອົາມື້ຮ່ວມຊີວິດຂອງໜ່ວຍພັກແຕ່ລະເດືອນ ເພື່ອກວດກາ, ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການ ແລະ ຕີລາຄາຄວາມຮັບຜິດຊອບຂອງສະມາຊິກພັກແຕ່ລະສະຫາຍ ພ້ອມທັງກຳນົດທິດທາງແຜນການຂອງເດືອນຕໍ່ໄປ.

### ຄ. ສະຫຼຸບການຈັດຕັ້ງປະຕິບັດແຜນການ

- ໜ່ວຍພັກຕ້ອງເປັນເຈົ້າການສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ດຳເນີນໃນເດືອນ 11 ຂອງທຸກໆປີ ການສະຫຼຸບຕີລາຄາປະເມີນຜົນຕ້ອງໃຫ້ເລິກເຊິ່ງ, ພາວະວິໃສ, ສະທ້ອນ ສ່ອງແສງເຖິງສະພາບຄວາມເປັນຈິງຂອງການເຄື່ອນໄຫວຊີ້ນຳ-ນຳພາຂອງໜ່ວຍພັກ ແລະ ສະມາຊິກພັກ ພ້ອມທັງສ້າງແຜນການສູ້ຊົນຂອງໜ່ວຍພັກຂອງປີຕໍ່ໄປ.

- ພາຍຫຼັງໜ່ວຍພັກ ໄດ້ຮັບຮອງບົດສະຫຼຸບການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນແລ້ວ ຈຶ່ງນໍາເອົາບົດສະຫຼຸບດັ່ງກ່າວໄປຜ່ານອົງການປົກຄອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທີ່ຢູ່ໃນຂອບເຂດການນໍາພາຂອງໜ່ວຍພັກ ເພື່ອຄວາມເປັນເອກະພາບໃນລະດັບສູງ, ຈາກນັ້ນ ຈຶ່ງລາຍງານໃຫ້ຄະນະພັກຂັ້ນເທິງກົງດົນພິຈາລະນາ.

## III. ການຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ

ການຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ ຕ້ອງບົນພື້ນຖານການສະຫຼຸບຕີລາຄາ ການເຄື່ອນໄຫວຊີ້ນໍາ-ນໍາພາຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ພົນສໍາເລັດການປະຕິບັດໜ້າທີ່ວຽກງານແຕ່ລະດ້ານຂອງສະມາຊິກພັກ ແລະ ໜ່ວຍພັກ ເປັນໄມ້ທາງວັດແທກຄຸນນະພາບຂອງສະມາຊິກພັກ ແລະໜ່ວຍພັກ.

### 1. ວິທີດໍາເນີນການຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ

#### ກ. ວິທີດໍາເນີນການຕີລາຄາຄຸນນະພາບສະມາຊິກພັກ

- ສະມາຊິກພັກແຕ່ລະສະຫາຍຕ້ອງຂຽນບົດສໍາຫຼວດຕົນເອງຕາມ 5 ເນື້ອໃນຂອງຄໍາສັ່ງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, 5 ໜ້າທີ່ ແລະ 9 ຂໍ້ຫ້າມຂອງສະມາຊິກພັກ ທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງພັກ; ພ້ອມທັງຕີລາຄາຄຸນນະພາບ ແລະ ແບ່ງປະເພດຕົນເອງ ແລ້ວນໍາໄປຜ່ານໃນໜ່ວຍພັກ.

- ສະມະຊິກພັກພາຍໃນໜ່ວຍພັກປະກອບຄໍາເຫັນ ພ້ອມທັງຕີລາຄາຄຸນນະພາບ ແລະແບ່ງປະເພດສະມາຊິກພັກດ້ວຍກັນ. ສໍາລັບສະມາຊິກພັກບໍານານ ແມ່ນບໍ່ໄດ້ຂຽນບົດສໍາຫຼວດ, ຕີລາຄາຄຸນນະພາບ ແລະ ແບ່ງປະເພດຕົນເອງ, ແຕ່ໃຫ້ປະກອບຄໍາເຫັນ, ຕີລາຄາຄຸນນະພາບ ແລະ ແບ່ງປະເພດໃຫ້ສະມາຊິກພັກຜູ້ອື່ນໆຢູ່ພາຍໃນໜ່ວຍພັກ.

- ຄະນະໜ່ວຍພັກສະຫຼຸບສັງລວມຜົນການຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ເພື່ອລາຍງານຄະນະພັກຂັ້ນເທິງກົງດົນຮັບຊາບ.

#### ຂ. ວິທີດໍາເນີນການຕີລາຄາຄຸນນະພາບໜ່ວຍພັກ

- ຄະນະໜ່ວຍພັກ ຕ້ອງຂຽນບົດສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ນໍາໄປຜ່ານພາຍໃນໜ່ວຍພັກ.

- ສະມາຊິກພັກພາຍໃນໜ່ວຍພັກປະກອບຄຳເຫັນດ້ານດີ, ດ້ານອ່ອນ ແລະ ວິທີປັບປຸງໃສ່ບົດສະຫຼຸບປະເມີນຜົນຂອງໜ່ວຍພັກ ພ້ອມທັງຕີລາຄາຄຸນນະພາບ ແລະ ແບ່ງປະເພດໜ່ວຍພັກ.

- ຄະນະໜ່ວຍພັກ ສະຫຼຸບສັງລວມຜົນການຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກເປັນລາຍລັກອັກສອນ ແລະ ລາຍງານໃຫ້ຄະນະພັກຂັ້ນເທິງກັ່ງຕົນພິຈາລະນາ.

2. ການຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ

ກ. ການຕີລາຄາຄຸນນະພາບສະມາຊິກພັກ ໃຫ້ດຳເນີນດ້ວຍການລົງຄະແນນສຽງປິດລັບໂດຍກົງແຕ່ລະດ້ານ ດັ່ງນີ້:

| | |
|---|---|
| - ຕີລາຄາດ້ານການເມືອງ | 2 ຄະແນນ |
| - ຕີລາຄາດ້ານແນວຄິດ | 1.5 ຄະແນນ |
| - ຕີລາຄາດ້ານການຈັດຕັ້ງ | 1.5 ຄະແນນ |
| - ຕີລາຄາດ້ານແບບແຜນການນຳພາ | 2 ຄະແນນ |
| - ຕີລາຄາຄວາມຮັບຜິດຊອບໜ້າທີ່ການເມືອງ | 3 ຄະແນນ |

ຄະແນນທີ່ລະບຸໄວ້ໃນຂ້າງເທິງນີ້ເປັນຄະແນນສູງສຸດຂອງແຕ່ລະດ້ານ

ຂ. ການແບ່ງປະເພດສະມາຊິກພັກ

| | |
|---|---|
| - ປະເພດ ແຂງ ຄະແນນລວມ | 9-10 ຄະແນນ |
| - ປະເພດ ກາງ ຄະແນນລວມ | 6-8,9 ຄະແນນ |
| - ປະເພດ ອ່ອນ ຄະແນນລວມ | 4-5,9 ຄະແນນ |
| - ປະເພດ ເສຍທາດ ຄະແນນລວມທຸດ | 4 ຄະແນນລົງມາ. |

ຄະແນນລວມບັນລຸ 9-10 ແມ່ນປະເພດແຂງ ແລະ ເປັນສະມາຊິກພັກທີ່ປອດໃສ, ເຂັ້ມແຂງ, ໜັກແໜ້ນ.

3. ການຕີລາຄາຄຸນນະພາບ ແລະ ແບ່ງປະເພດໜ່ວຍພັກ

ກ. ການຕີລາຄາຄຸນນະພາບໜ່ວຍພັກດ້ວຍການໃຫ້ຄະແນນແຕ່ລະດ້ານ

| | |
|---|---|
| - ຕີລາຄາການນຳພາດ້ານການເມືອງ | 2 ຄະແນນ |
| - ຕີລາຄາການນຳພາດ້ານແນວຄິດ | 1,5 ຄະແນນ |
| - ຕີລາຄາການນຳພາດ້ານການຈັດຕັ້ງ | 1,5 ຄະແນນ |
| - ຕີລາຄາດ້ານແບບແຜນການນຳພາ | 2 ຄະແນນ |

- ຕິລາຄາການນຳພາປະຕິບັດໜ້າທີ່ການເມືອງ 3 ຄະແນນ

ຄະແນນທີ່ລະບຸໄວ້ໃນຂ້າງເທິງນີ້ແມ່ນຄະແນນສູງສຸດຂອງແຕ່ລະດ້ານ.

ຂ. ການແບ່ງປະເພດໜ່ວຍພັກ

- ປະເພດ ແຂງ ຄະແນນລວມ 9-10 ຄະແນນ
- ປະເພດ ກາງ ຄະແນນລວມ 6-8,9 ຄະແນນ
- ປະເພດ ອ່ອນ ຄະແນນລວມຫຼຸດ 6 ຄະແນນລົງມາ
- ໜ່ວຍພັກໃດມີສະມາຊິກພັກແຂງກວມ 80% ຂຶ້ນໄປ, ບໍ່ມີສະມາຊິກພັກອ່ອນ ແລະ ເສຍທາດ; ໜ່ວຍພັກມີຄະແນນລວມບັນລຸ 9-10 ຄະແນນ ໜ່ວຍພັກນັ້ນຈຶ່ງສາມາດຢັ້ງຢືນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

## IV. ມາດຕະການຈັດຕັ້ງປະຕິບັດ

1. ຄະນະພັກແຕ່ລະຂັ້ນ ແລະ ສະມາຊິກພັກແຕ່ລະສະຫາຍ ຕ້ອງຄົ້ນຄວ້າ, ເຊື່ອມຊຶມກຳແໜ້ນເນື້ອໃນຄຳສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຄຳແນະນຳສະບັບນີ້ໃຫ້ເລິກເຊິ່ງ ພ້ອມທັງນຳພາຈັດຕັ້ງປະຕິບັດຕົວຈິງດ້ວຍຄວາມຮັບຜິດຊອບສູງ ແລະ ເປັນເອກະພາບໃນທົ່ວພັກ.

2. ຄະນະພັກແຕ່ລະຂັ້ນ ແລະ ສະມາຊິກພັກແຕ່ລະສະຫາຍ ມີຄວາມຮັບຜິດຊອບຕໍ່ການຝຶກຝົນຫຼໍ່ຫຼອມຕົນເອງ ແລະ ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຖືເປັນໜ້າທີ່ການເມືອງຂອງຕົນ.

3. ຄະນະພັກແຕ່ລະຂັ້ນຊີ້ນຳບັນດາໜ່ວຍພັກທີ່ຂຶ້ນກັບອົງຄະນະພັກຕົນ ເປັນເຈົ້າການສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ພ້ອມທັງຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ.

4. ງົບປະມານຮັບໃຊ້ໃຫ້ແກ່ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນແມ່ນໃຫ້ເອົາເຂົ້າແຜນງົບປະມານປະຈຳປີຂອງກະຊວງ-ອົງການ ແລະ ທ້ອງຖິ່ນຕົນ.

5. ຄະນະຈັດຕັ້ງສູນກາງພັກ ເປັນຜູ້ອອກແບບ ແລະ ຈັດພິມໃບຢັ້ງຢືນໜ່ວຍພັກປອດໃສເຂັ້ມແຂງ, ໜັກແໜ້ນ; ຄະນະພັກກະຊວງ-ອົງການ, ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຕົກລົງຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທີ່ຂຶ້ນກັບອົງຄະນະພັກຂັ້ນຕົນ.

6. ການມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນໃຫ້ຖືເອົາໂອກາດວັນສຳຄັນຂອງພັກ, ຂອງຊາດ ແລະ ສະຫຼຸບພົນງານປະຈຳປີຂອງກະຊວງ-ອົງການ, ກົມກອງ ແລະ ທ້ອງຖິ່ນ.

7. ຄະນະຈັດຕັ້ງແຂວງ, ນະຄອນຫຼວງວຽງຈັນ ແລະ ກົມຈັດຕັ້ງກະຊວງ-ອົງການເປັນເຈົ້າການແນະນຳ, ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສເຂັ້ມແຂງ, ໜັກແໜ້ນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານຄະນະພັກຂັ້ນຕົນ ແລະ ລາຍງານຄະນະຈັດຕັ້ງສູນກາງພັກ ເພື່ອສັງລວມລາຍງານຕໍ່ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກຮັບຊາບ ແລະ ໃຫ້ທິດຊີ້ນຳເປັນປົກກະຕິ.

ຫົວໜ້າຄະນະຈັດຕັ້ງສູນກາງພັກ

ຈັນສີ ໂພສີຄຳ